ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1342/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 10-12-2020

ກະຊວງອຸດສາຫະກຳແລະການຄ້າ
ເລກທີ 2443
ວັນທີ 14/12/20

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ການເງິນ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງ ການຕ່າງປະເທດ.
- ທ່ານ ລັດຖະມົນຕີກະຊວງ ສາທາລະນະສຸກ.
- ທ່ານ ເຈົ້າແຂວງ ຫົວພັນ.

ເລື່ອງ: ທິດຊີ້ນຳຕໍ່ການສະເໜີຂໍເປີດດ່ານທ້ອງຖິ່ນຊົ່ວຄາວ ຂອງແຂວງຫົວພັນ ເພື່ອສົ່ງອອກຜົນຜະລິດກະສິກຳໄປປະເທດ ສສ ຫວຽດນາມ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017.
- ອີງຕາມ ເອກະສານສະເໜີ ຂອງແຂວງຫົວພັນ ສະບັບເລກທີ 82/ຈຂ.ຫພ, ລົງວັນທີ 17 ພະຈິກ 2020.
- ອີງຕາມ ການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 03 ທັນວາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕິກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້: " ເຫັນດີອະນຸມັດ ໃຫ້ແຂວງຫົວພັນ ເປີດດ່ານທ້ອງຖິ່ນຊົ່ວຄາວ ດ່ານບ້ານດ່ານ ຫາ ຊຽງເຂືອງ ແຂວງເຊີນລາ (ສສ ຫວຽດນາມ) ເພື່ອສົ່ງອອກຜົນຜະລິດກະສິກຳ ທີ່ມີຄວາມຈຳເປັນ ຕາມການສະເໜີ. ແຕ່ຕ້ອງກຳນົດວັນເວລາເພື່ອຂໍເປີດດ່ານໃນການຂົນສົ່ງອອກສິນຄ້າ ແລະ ຈັດຕັ້ງການຄຸ້ມຄອງໃຫ້ຮັດກຸມ. ພ້ອມທັງ ຈັດຕັ້ງປະຕິບັດມາດຕະການສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ທີ່ລັດຖະບານວາງອອກ ຢ່າງເຂັ້ມງວດ ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ຄຳຈວັນ ຈັນທະລາວັນ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| - ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ | 01 | ສະບັບ |
| - ຫ້ອງວ່າການສູນກາງພັກ | 01 | ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | 01 | ສະບັບ |
| - ກະຊວງ ກະສິກຳ ແລະ ປ່າໄມ້ | 01 | ສະບັບ |
| - ກະຊວງ ອຸດສາຫະກຳ ແລະ ການຄ້າ | 01 | ສະບັບ |
| - ຄະນະ ຫສນຍ ທ່ານລະ | 01 | ສະບັບ |
| - ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 | ສະບັບ |
| - ກົມເລຂາ, ຫສນຍ | 01 | ສະບັບ |
| - ກົມກວດກາ, ຫສນຍ | 01 | ສະບັບ |
| - ເກັບມ້ຽນ | 01 | ສະບັບ |